Media Release

Cambodia • Lao PDR • Thailand • Viet Nam
For sustainable development

**ເພື່ອການເຜີຍແຜ່** (ສະບັບແປຢ່າງບໍ່ເປັນທາງການ)

# ເຢຍລະມັນໃຫ້ການຊ່ວຍເຫລືອວຽກງານຮ່ວມມືດ້ານການຄຸ້ມຄອງນໍ້າຂ້າມຊາຍແດນ ແລະ ການຕິດຕາມຜົນກະທົບຕໍ່ສິ່ງແວດລ້ອມ

**ນະຄອນຫຼວງວຽງຈັນ, ສປປ ລາວ, ວັນທີ 13 ທັນວາ 2019 -** ລັດຖະບານເຢຍລະມັນໄດ້ຕົກລົງສະໜອງທຶນ 2 ລ້ານຢູໂຣ (ປະມານ 2,2 ລ້ານໂດລາສະຫະລັດ) ໃຫ້ກັບຄະນະກໍາມາທິການແມ່ນໍ້າຂອງສາກົນ ເພື່ອເພີ່ມພູນການຮ່ວມມືດ້ານການຄຸ້ມຄອງນໍ້າຂ້າມຊາຍແດນ ແລະ ການຕິດຕາມຜົນກະທົບຕໍ່ສິ່ງແວດລ້ອມຈາກເຂື່ອນໃນແມ່ນໍ້າຂອງ.

ຂໍ້ຕົກລົງຊ່ວຍເຫລືອດັ່ງກ່າວໄດ້ລົງນາມໂດຍທ່ານ ດຣ ອັນ ພິດ ຣັດດະ ຫົວໜ້າ ກອງເລຂາຄະນະກໍາມາທິການແມ່ນໍ້າຂອງສາກົນ ແລະ ພະນະທ່ານ ເຢັນສ ລຸກເຄີເຣີມ, ເອກອັກຄະລາຊະທູດເຢຍລະມັນປະຈໍາ ສປປ ລາວ ທີ່ ນະຄອນຫຼວງວຽງຈັນ ໃນວັນທີ 13 ທັນວາ 2019. ການຊ່ວຍເຫລືອຄັ້ງນີ້ເຮັດໃຫ້ຈໍານວນການຊ່ວຍເຫລືອທັງຫມົດຂອງເຢຍລະມັນເພີ່ມຂຶ້ນເປັນ 6.45 ລ້ານຢູໂຣ ເພື່ອແຜນຍຸດທະສາດ ຄມສ 2016-2020 ແລະ ແຜນແຜນຍຸດທະສາດໃຫມ່ 2021-2025.

ເພື່ອເປັນການຍຶດຫມັ້ນສາຍພົວພັນຮ່ວມມືອັນຍາວນານລະຫວ່າງ ເຢຍລະມັນ ແລະ ຄະນະກໍາມາທິການແມ່ນໍ້າຂອງສາກົນ, ການຊ່ວຍເຫຼືອຂອງເຢຍລະມັນແມ່ນແນໃສ່ຍົກສູງການປຶກສາຫາລື ແລະ ການຮ່ວມມືໃນການວາງແຜນ ແລະ ຄຸ້ມຄອງຊັບພະຍາກອນນໍ້າຂ້າມຊາຍແດນໃນບັນດາປະເທດແມ່ນໍ້າຂອງຕອນລຸ່ມ ເຊິ່ງເປັນສະມາຊິກຂອງ ຄມສ ຄື ຣາຊະອານາຈັກກໍາປູເຈຍ, ສປປ ລາວ, ຣາຊະອານາຈັກໄທ ແລະ ສສ ຫວຽດນາມ.

ການຊ່ວຍເຫຼືອດັ່ງກ່າວຈະກວມເອົາປີ 2019-2021 ແລະ ມີຈຸດປະສົງເພື່ອເພີ່ມພູນຄວາມພະຍາຍາມໃນການຕິດຕາມຜົນກະທົບຕໍ່ສິ່ງແວດລ້ອມຈາກເຂື່ອນທີ່ສ້າງຂຶ້ນແລ້ວໃນແມ່ນໍ້າຂອງ ເຂື່ອນໄຊຍະບູລີ ແລະ ດອນສາໂຮ້ງ, ພ້ອມດຽວກັນນີ້ ກໍ່ເພື່ອຫາວິທີທາງເພື່ອຫລຸດຜ່ອນຜົນກະທົບຜ່ານໂຄງການຕິດຕາມຜົນກະທົບຕໍ່ສິ່ງແວດລ້ອມຮ່ວມ ຂອງ ຄມສ.

ດຣ ຣັດດະ ໄດ້ກ່າວວ່າ "ການຊ່ວຍເຫຼືອຂອງເຢຍລະມັນມາໃນຊ່ວງເວລາທີ່ສໍາຄັນເພາະໃນຂະນະນີ້ແມ່ນໍ້າຂອງໄດ້ປະສົບກັບການຫາຄວາມສົມດຸນ ລະຫວ່າງ ການພັດທະນາໃນຂະແໜງພະລັງງານ, ການຂົນສົ່ງ ແລະ ກະສິກໍາ ແລະ ຜົນກະທົບຕໍ່ສິ່ງແວດລ້ອມ ແລະ ການດໍາລົງຊີວິດຂອງຄົນໃນທ້ອງຖິ່ນ".

ໂດຍອີງຕາມການລາຍງານຫລ້າສຸດຂອງ ຄສມ, ໄພແຫ້ງແລ້ງໃນປີ 2019 ໄດ້ເຮັດໃຫ້ລະດັບແມ່ນໍ້າຂອງຢູ່ຈຸດຕໍ່າສຸດໃນຮອບ 60 ປີ. ຫລາຍຂົງເຂດຂອງອ່າງນໍ້າຂອງໄດ້ປະສົບກັບບັນຫາລະດັບການໄຫລຂອງນໍ້າຕໍ່າຕັ້ງແຕ່ເດືອນມິຖຸນາ ເປັນຕົ້ນມາ.

ການໄຫລຂອງນໍ້າ, ການຫລຸດລົງຂອງຕະກອນນໍ້າ, ແລະ ການປາກົດມີສາຫລ່າຍໃນດິນຊາຍ ແລະ ຊັ້ນພື້ນຫີນ ອາດເປັນສາເຫດເຮັດໃຫ້ແມ່ນໍ້າຂອງມີສີຂຽວມໍລະກົດ. ຄສມ ເຕືອນວ່າສີຂຽວມໍລະກົດນີ້ອາດເກີດຂຶ້ນຢູ່ບ່ອນອື່ນໆນໍາ ແລະ ອາດນໍາມາສູ່ຄວາມສ່ຽງໃນການປ່ຽນແປງ ແລະ ຫລຸດລົງຂອງຄວາມຫລາກຫລາຍທາງຊີວະພາບໃນນໍ້າເນື່ອງຈາກນໍ້າມີຄວາມໃສ.

ທ່ານ ຣັດດະ ກ່າວຕື່ມວ່າ "ປາກົດການດັ່ງກ່າວນີ້ແມ່ນຕ້ອງໄດ້ຮັບການຕິດຕາມ ແລະ ລາຍງານຢ່າງຮີບດ່ວນ ເພື່ອການຈັດການອ່າງແມ່ນ້ຳຂອງ, ຂ້າພະເຈົ້າຂໍຂອບໃຈການຊ່ວຍເຫລືອຂອງເຢຍລະມັນທີ່ເຮັດໃຫ້ວຽກງານດັ່ງກ່າວປາກົດຜົນເປັນຈິງ"

ເຢຍລະມັນໄດ້ໃຫ້ການສະໜັບສະໜູນທຶນແກ່ ຄມສ ແຕ່ປີ 1995, ໂດຍໄດ້ໃຫ້ທຶນປະມານ 50 ລ້ານຢູໂຣ. ໃນໄລຍະທີ່ຜ່ານມາ, ການສະໜັບສະໜູນຂອງເຢຍລະມັນໄດ້ຊ່ວຍໃຫ້ ຄມສ ສາມາດຈັດຕັ້ງປະຕິບັດກິດຈະກຳຍຸດທະສາດຈຳນວນຫຼວງຫຼາຍ ລວມທັງການປະຕິຮູບດ້ານສະຖາບັນ, ການພັດທະນາພະລັງງານນ້ຳແບບຍືນຍົງ, ການຄຸ້ມຄອງຊັບພະຍາກອນນ້ຳແບບປະສົບປະສານ, ການຫລຸດຜ່ອນຜົນກະທົບຈາກນ້ຳຖ້ວມ ແລະ ການປ່ຽນແປງດິນຟ້າອາກາດ.

ພະນະທ່ານ ເຢັນສ ລຸກເຄີເຮີມ ໄດ້ກ່າວວ່າ "ໃນເວລານີ້ແມ່ນ້ຳຂອງແມ່ນກຳລັງໄດ້ຮັບຜົນກະທົບຈາກ ໂຄງການຈັດການນ້ຳເພື່ອກະສິກຳ, ເຂື່ອນໄຟຟ້າ ແລະ ນ້ຳປະປາ, ວຽກງານຂອງ ຄມສ ໃນການຕິດຕາມ ແລະ ຈັດການປ່ຽນແປງຂອງອ່າງນ້ຳໄດ້ກາຍເປັນວຽກງານທີ່ມີຄວາມສຳຄັນທີ່ສຸດ".

ພະນະທ່ານໄດ້ກ່າວຕໍ່ອີກວ່າ "ທຶນຊ່ວຍເຫລືອດັ່ງກ່າວນີ້ຈະຊ່ວຍໃຫ້ ຄມສ ໄດ້ເລັ່ງວຽກງານການປະເມີນຜົນກະທົບ ແລະ ເຮັດໃຫ້ຜູ້ທີ່ມີອຳນາດຕັດສິນໃນໄດ້ຕະຫນັກເຖິງຜົນກະທົບ ແລະ ຈັດຕັ້ງປະຕິບັດມາດຕະການທີ່ຈຳເປັນຢ່າງຖ່ວງທັນ ໄວຍິ່ງຂຶ້ນໄດ້".

**ໝາຍເຫດ:**

ຄມສ ແມ່ນ ອົງການຈັດຕັ້ງລະຫວ່າງລັດຖະບານ ເພື່ອການປຶກສາຫາລື ແລະ ການຮ່ວມມືໃນອ່າງແມ່ນ້ຳຂອງຕອນລຸ່ມ, ສ້າງຕັ້ງຂຶ້ນໃນປີ 1995 ອີງຕາມສັນຍາແມ່ນ້ຳຂອງລະຫວ່າງຣາຊະອານາຈັກກຳປູເຈຍ, ສປປ ລາວ , ຣາຊະອານາຈັກໄທ ແລະ ສສ ຫວຽດນາມ. ອົງການດັ່ງກ່າວເປັນກົນໄກລະດັບພາກພື້ນ ເພື່ອການຮ່ວມມືກ່ຽວກັບນ້ຳ ແລະ ທັງເປັນສູນກາງຄວາມຮູ້ການຄຸ້ມຄອງຊັບພະຍາກອນນ້ຳເພື່ອການພັດທະນາທີ່ຍືນຍົງຂອງພາກພື້ນ.

**- ຈົບ -**

ຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່ :
ທ່ານ ໂສພຽກ ແມ
ເຈົ້າໜ້າທີ່ການຂ່າວສື່ສານ
ກອງເລຂາຄະນະກຳມາທິການແມ່ນ້ຳຂອງສາກົນ
ອີເມວ: sopheak@mrcmekong.org
ໂທລະສັບ: +856-21-263263, ຕໍ່. 4012
ໂທລະສັບມືຖື : +856-20-77779168